**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ　　　　　　　　　　　　0 4 6 7 5 --
ກົມແຜນການ ແລະ ການເງິນ　　　　　　　　　　　　ເລກທີ:　　　/ກຜງ
ນະຄອນຫລວງວຽງຈັນ, ວັນທີ: 13 FEB 2023

# <u>ປະກາດຮັບສະໝັກພະນັກງານຊ່ວຍວຽກ</u>

ກົມແຜນການ ແລະ ການເງິນ ໃນນາມຜູ້ຮັບຜິດຊອບໜ້າວຽກຍ່ອຍ 3.2 ການພັດທະນາອົງກອນຂອງຂະແໜງໂຍທາທິການ ແລະ ຂົນສົ່ງ, ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສຽງໃຕ້ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC) ມີຄວາມຕ້ອງການພະນັກງານຊ່ວຍວຽກ ຈຳນວນ 04 ຕຳແໜ່ງ ປະຈຳຢູ່ພະແນກແຜນການ ແລະ ພະແນກຮ່ວມມື ແລະ ລົງທຶນ ດັ່ງລາຍລະອຽດລຸ່ມນີ້:

## I. ພະແນກແຜນການ:

1. ພະນັກງານຊ່ວຍວຽກຊ່ຽວຊານ.
2. ພະນັກງານຊ່ວຍວຽກເກັບກຳຂໍ້ມູນໂຄງການ ແລະ ການຈັດຕັ້ງປະຕິບັດແຜນພັດທະນາ 5 ປີ ຂອງກະຊວງ ຍທຂ.

## II. ພະແນກຮ່ວມມື ແລະ ລົງທຶນ:

1. ພະນັກງານຊ່ວຍວຽກບໍລິຫານທົ່ວໄປ.
2. ພະນັກງານຊ່ວຍວຽກການເງິນ.

➢ **ຄຸນນະວຸດທິ ແລະ ເງື່ອນໄຂຂອງຜູ້ສະໝັກ ປະຈຳຢູ່ພະແນກແຜນການ:**

1. ໃບປະກາດສະນີຍະບັດລະດັບປະລິນຍາຕີດ້ານການບໍລິຫານ, ເສດຖະສາດ, ພົວພັນສາກົນ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ, ຖ້າລະດັບເໜືອກວ່າປະລິນຍາຕີຂຶ້ນໄປຈະພິຈາລະນາເປັນພິເສດ.
2. ຕ້ອງຜ່ານການຝຶກງານຕາມຫຼັກສູດການສຶກສາຢ່າງໜ້ອຍ 3 ເດືອນຂຶ້ນໄປ ຫຼື ປະສົບການເຮັດວຽກຢ່າງໜ້ອຍ 1 ປີ ໃນດ້ານການບໍລິຫານ, ເສດຖະສາດ, ພົວພັນສາກົນ ຫຼື ປະສົບການເຮັດວຽກຢ່າງໜ້ອຍ 1 ປີ ໃນດ້ານການບໍລິຫານ, ເສດຖະສາດ, ພົວພັນສາກົນ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ, ຖ້າມີປະສົບການເຮັດວຽກກັບອົງການຈັດຕັ້ງຂອງລັດຖະບານ ຫຼື ອົງການຈັດຕັ້ງສາກົນຈະພິຈາລະນາເປັນພິເສດ.
3. ຄວາມຮູ້ທາງດ້ານ Microsoft Office ແລະ ການນຳໃຊ້ອິນເຕີເນັດໃນລະດັບດີຂຶ້ນໄປ.
4. ຄວາມຮູ້ພື້ນຖານດ້ານພາສາອັງກິດ: ສາມາດໃຊ້ພາສາທາງລັດຖະການລາວ ແລະ ອັງກິດໄດ້ໃນລະດັບດີຂຶ້ນໄປ (ການເວົ້າ, ຟັງ, ຂຽນ ແລະ ອ່ານ).

- **ຄຸນນະວຸດທິ ແລະ ເງື່ອນໄຂຂອງຜູ້ສະໝັກ ປະຈຳຢູ່ພະແນກຮ່ວມມື ແລະ ລົງທຶນ:**

1. ໃບປະກາດສະນີຍະບັດລະດັບຊັ້ນສູງ ຫຼື ປະລິນຍາຕີ ດ້ານການເງິນ, ການບັນຊີ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ.
2. ຕ້ອງຜ່ານການຝຶກງານຕາມຫຼັກສູດການສຶກສາຢ່າງໜ້ອຍ 03 ເດືອນຂຶ້ນໄປ ຫຼື ປະສົບການເຮັດວຽກຢ່າງໜ້ອຍ 1 ປີ ໃນດ້ານການເງິນ, ການບັນຊີ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ, ຖ້າມີປະສົບການເຮັດວຽກກັບອົງການຈັດຕັ້ງຂອງລັດຖະບານ ຫຼື ອົງການຈັດຕັ້ງສາກົນຈະພິຈາລະນາເປັນພິເສດ.
3. ຄວາມຮູ້ທາງດ້ານ Microsoft Office ແລະ ການນຳໃຊ້ອິນເຕີເນັດໃນລະດັບດີຂຶ້ນໄປ.
4. ຄວາມຮູ້ພື້ນຖານດ້ານພາສາອັງກິດໃນລະດັບດີ.

- ຜູ້ທີ່ມີຄວາມສົນໃຈສາມາດຍື່ນເອກະສານໄດ້ທີ່ **ພະແນກຊັບສິນ-ທີ່ດິນ** ກົມແຜນການ ແລະ ການເງິນ ວັນທີປິດຮັບສະໝັກ ວັນທີ 21/02/2023.

ກະຊວງໂยທາທິການ ແລະ ຂົນສົ່ງ
ກົມແຜນການ ແລະ ການເງິນ

ຫົວໜ້າກົມ

ວັນ ດີລະພັນ

<u>ຕິດຕໍ່ພົວພັນ</u>

ທ. ອານຸທອນ ວໍລະຈິດ 020 5994 1188.

99855389
55415146